ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0606/ຜ-ຝຟລ

ນະຄອນຫຼວງວຽງຈັນ,ວັນທີ 06/04/2020

ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງການເລື່ອນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

- ອີງຕາມໜັງສືແຈ້ງຕອບຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 0062/ສຄຄຊ, ລົງວັນທີ 03 ເມສາ 2020.
- ອີງຕາມການຕົກລົງເຫັນດີ ຂອງສະພາບໍລິຫານ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

ເນື່ອງຈາກສະຖານະການ ການແຜ່ລະບາດຂອງໄວຣັດອັກເສບປອດຈາກຈຸລະໂລກສາຍພັນໃໝ່ (COVID-19) ມີແນວໂນ້ມແຜ່ລະບາດທີ່ທະວີຄວາມຮຸນແຮງຢ່າງໄວວາໃນຫຼາຍປະເທດທົ່ວໂລກ ເຮັດໃຫ້ມີຜູ້ຕິດເຊື້ອເພີ່ມຂຶ້ນຢ່າງຕໍ່ເນື່ອງ. ສຳລັບ ສປປ ລາວ ກໍໄດ້ພົບຜູ້ຕິດເຊື້ອ ແລະ ມີຄວາມສ່ຽງທີ່ຈະມີການແຜ່ລະບາດໃນທົ່ວປະເທດ. ສະນັ້ນ, ເພື່ອປ້ອງກັນການແຜ່ລະບາດໄປສູ່ບຸກຄົນຈຳນວນຫຼາຍ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("**ບໍລິສັດ**") ມີຄວາມຫ່ວງໃຍຕໍ່ສຸຂະອະນາໄມ ແລະ ຄວາມປອດໄພຂອງຜູ້ທີ່ຈະເຂົ້າຮ່ວມກອງປະຊຸມ. ນອກຈາກນີ້, ກໍຍັງເປັນການສະແດງຄວາມຜິດຊອບຕໍ່ສັງຄົມໂດຍລວມ ຈາກເຫດຜົນ ແລະ ຄວາມຈຳເປັນດັ່ງກ່າວຂ້າງຕົ້ນ. ບໍລິສັດ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019 ອອກໄປໂດຍບໍ່ມີກຳນົດ ແລະ ຍົກເລີກວາລະການປະຊຸມ, ວັນ-ເວລາ ແລະ ສະຖານທີ່ປະຊຸມຂອງການປະຊຸມທີ່ໄດ້ກຳນົດໄວ້ແລ້ວ ແລະ ໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບແລ້ວໃນວັນທີ 10 ກຸມພາ 2020 ແລະ ວັນທີ 23 ມີນາ 2020. ສ່ວນການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມ ແມ່ນຍັງຮັກສາໄວ້ຄືເກົ່າ. ທັງນີ້, ການເລື່ອນກອງປະຊຸມດັ່ງກ່າວບໍ່ໄດ້ສົ່ງຜົນກະທົບຕໍ່ການປະຕິບັດວຽກງານຂອງບໍລິສັດແຕ່ຢ່າງໃດ ແລະ ບໍ່ໄດ້ກະທົບຕໍ່ສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມ.

ບໍລິສັດຂໍອະໄພຢັນດາທ່ານຜູ້ຖືຮຸ້ນເປັນຢ່າງສູງ ທີ່ຕ້ອງເລື່ອນກອງປະຊຸມສາມັນຜູ້ຖືຮຸ້ນໃນຄັ້ງນີ້ຕາມເຫດຜົນດັ່ງກ່າວຂ້າງເທິງ, ບໍລິສັດຈະຕິດຕາມສະຖານະການການແຜ່ລະບາດຂອງ COVID-19 ຢ່າງໃກ້ຊິດ. ຖ້າຫາກສະຖານະການເຂົ້າສູ່ພາວະປົກກະຕິ ບໍລິສັດ ຈະພິຈາລະນາກຳນົດວາລະການປະຊຸມ, ວັນ-ເວລາ ແລະ ແລະ ສະຖານທີ່ປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019 ແລະ ຈະແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ ສປປລາວ ຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la